**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 03 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 10 / 08 / 21

# ມະຕິ

## ກອງປະຊຸມສະພາແຫ່ງຊາດ

## ວ່າດ້ວຍການຮັບຮອງເອົາວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານ ເສດຖະກິດ-ການເງິນ

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ) ປີ 2015 ມາດຕາ 53;
- ອີງຕາມ ກົດໝາຍ ວ່າດ້ວຍສະພາແຫ່ງຊາດ ສະບັບເລກທີ 64/ສພຊ, ລົງວັນທີ 9 ທັນວາ 2015 ມາດຕາ 61;
- ອີງຕາມບົດລາຍງານຂອງລັດຖະບານ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ລົງວັນທີ 5 ສິງຫາ 2021.

ຜ່ານການຄົ້ນຄວ້າ, ພິຈາລະນາ ແລະ ປະກອບຄຳເຫັນ ຢ່າງກົງໄປກົງມາ ແລະ ເລິກເຊິ່ງ ຂອງບັນດາທ່ານສະມາຊິກສະພາແຫ່ງຊາດ ດ້ວຍຄວາມຮັບຜິດຊອບສູງຕໍ່ບົດລາຍງານຂອງລັດຖະບານ ໃນກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາແຫ່ງຊາດ ຊຸດທີ IX.

## ກອງປະຊຸມຕົກລົງ:

**ມາດຕາ 1 ຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບ ວາລະແຫ່ງຊາດວ່າດ້ວຍ ການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ໃນໄລຍະປີ 2021-2023**

ກອງປະຊຸມຮັບຮອງບົດລາຍງານຂອງລັດຖະບານກ່ຽວກັບ ວາລະແຫ່ງຊາດວ່າດ້ວຍ ການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ທີ່ໄດ້ກຳນົດທັດສະນະຊີ້ນຳ, ຫຼັກການ, ຈຸດປະສົງ, ລະດັບຄາດໝາຍ, ທິດທາງ, ມາດຕະການ, ວຽກຈຸດສຸມ, ກົນໄກໃນການຈັດຕັ້ງປະຕິບັດ ແລະ ການແບ່ງຄວາມຮັບຜິດຊອບ ຕາມການສະເໜີຂອງລັດຖະບານ.

**ມາດຕາ 2 ຮັບຮອງເອົາຄາດໝາຍຕົ້ນຕໍ ຂອງວາລະແຫ່ງຊາດ ຮອດປີ 2023**

1. ສູ້ຊົນເຮັດໃຫ້ລະດັບໜີ້ສິນສາທາລະນະ ຍັງເຫຼືອບໍ່ເກີນ 64,5% ຂອງ GDP, ໃນນັ້ນ: ຍອດໜີ້ສິນຕ່າງປະເທດ ຍັງເຫຼືອບໍ່ເກີນ 55,4% ຂອງ GDP ແລະ ຄາດໝາຍໜີ້ສິນພາຍໃນ ໃຫ້ຢູ່ໃນກອບຮັກສາໄດ້ສະຖຽນລະພາບເສດຖະກິດມະຫາພາກ, ຍູ້ການເຕີບໂຕເສດຖະກິດ ແລະ ຄວາມສາມາດຊຳລະຕາມທີ່ກຳນົດໄວ້ໃນກົດໝາຍ;

2. ສູ້ຊົນເຮັດໃຫ້ລະດັບຄັງສຳຮອງເງິນຕາຕ່າງປະເທດ ໃຫ້ສາມາດກຸ້ມການນຳເຂົ້າໄດ້ບໍ່ໃຫ້ຫຼຸດ 3 ເດືອນ, ຫຼຸດຜ່ອນຄວາມແຕກຕ່າງລະຫວ່າງອັດຕາແລກປ່ຽນຂອງທະນາຄານ ແລະ ຕະຫຼາດ ໃຫ້ຢູ່ໃນລະດັບບໍ່ເກີນ 2% ແລະ ຄວບຄຸມອັດຕາສ່ວນໜີ້ທີ່ບໍ່ເກີດດອກອອກຜົນ (NPL) ໃຫ້ຢູ່ໃນລະດັບບໍ່ເກີນ 3%.

## ມາດຕາ 3 ຮັບຮອງເອົາ 5 ວຽກງານຈຸດສຸມ

ກອງປະຊຸມຮັບຮອງເອົາ 5 ວຽກງານຈຸດສຸມຂອງລັດຖະບານ ແລະ ໄດ້ປັບປຸງເພີ່ມເຕີມບາງເນື້ອໃນ ຕາມຄຳເຫັນຂອງກອງປະຊຸມ ດັ່ງນີ້:

**ຈຸດສຸມທີ 1:** ສົ່ງເສີມການຜະລິດເພື່ອທົດແທນການນຳເຂົ້າ ແລະ ເປັນສິນຄ້າສົ່ງອອກ, ໂດຍການນຳໃຊ້ກາລະໂອກາດ ແລະ ທ່າແຮງບົ່ມຊ້ອນທີ່ໄດ້ປຽບ ໃນເງື່ອນໄຂເຊື່ອມໂຍງ ແລະ ເຊື່ອມຈອດ ຕາມແລວທາງເສດຖະກິດກັບພາກພື້ນ ແລະ ສາກົນ ເພື່ອສ້າງລາຍຮັບໃຫ້ໄດ້ໄວ ແລະ ສ້າງພື້ນຖານເສດຖະກິດແຫ່ງຊາດໃຫ້ເຂັ້ມແຂງ ແລະ ຍືນຍົງ;

**ຈຸດສຸມທີ 2:** ສ້າງຄວາມເຂັ້ມແຂງທາງດ້ານການເກັບລາຍຮັບເຂົ້າງົບປະມານ ໂດຍຫັນເປັນທັນສະໄໝແບບດິຈິຕອນ ເພື່ອຮັບປະກັນການເກັບລາຍຮັບໃຫ້ຄົບຖ້ວນ, ສະກັດກັ້ນການຮົ່ວໄຫຼ ໄປພ້ອມກັບການຂະຫຍາຍຖານລາຍຮັບໃໝ່ທີ່ຍັງມີທ່າແຮງ; ປັບປຸງນິຕິກຳ, ກົນໄກການບໍລິຫານ ແລະ ບຸກຄະລາກອນ ໃຫ້ມີຄຸນນະພາບ ແລະ ປະສິດທິພາບ;

**ຈຸດສຸມທີ 3:** ຍົກສູງປະສິດທິຜົນການຄຸ້ມຄອງລາຍຈ່າຍງົບປະມານຂອງລັດ, ສ້າງແຜນຍຸດທະສາດແກ້ໄຂໜີ້ສິນສາທາລະນະ ໃນແຕ່ລະໄລຍະ ທີ່ຮັບປະກັນແຫຼ່ງທຶນຊຳລະທີ່ໝັ້ນຄົງ ຕາມກົດໝາຍ, ແກ້ໄຂໜີ້ຕ້ອງສົ່ງຂອງວິສາຫະກິດລັດ ທີ່ລັດຖະບານຄ້ຳປະກັນ, ດຳເນີນການປະຢັດ, ຕ້ານການຟຸມເຟືອຍ ແລະ ຈຳກັດລາຍຈ່າຍງົບປະມານ ທີ່ບໍ່ຈຳເປັນ;

**ຈຸດສຸມທີ 4:** ສ້າງສະຖຽນລະພາບທາງດ້ານເງິນຕາ ເປັນຕົ້ນ ຄວບຄຸມອັດຕາເງິນເຟີ້, ຄຸ້ມຄອງອັດຕາແລກປ່ຽນ, ສ້າງຄັງສຳຮອງເງິນຕາຕ່າງປະເທດ, ຫຼຸດຜ່ອນໜີ້ທີ່ບໍ່ເກີດດອກອອກຜົນ, ສ້າງການຫັນປ່ຽນໃໝ່ໃນລະບົບຄຸ້ມຄອງເງິນຕາຕ່າງປະເທດ ໃຫ້ເຂັ້ມແຂງ ເພື່ອສາມາດຊຳລະສະສາງກັບສາກົນ;

**ຈຸດສຸມທີ 5:** ຍົກສູງປະສິດທິພາບການຄຸ້ມຄອງລັດ-ຄຸ້ມຄອງສັງຄົມ ດ້ວຍກົດໝາຍໃຫ້ມີຜົນສັກສິດ.

## ມາດຕາ 4 ຮັບຮອງເອົາມາດຕະການຈັດຕັ້ງປະຕິບັດ

ກອງປະຊຸມຮັບຮອງເອົາມາດຕະການຕາມການສະເໜີຂອງລັດຖະບານ ແລະ ໄດ້ສະເໜີເພີ່ມເຕີມບາງເນື້ອໃນຕາມຄຳເຫັນຂອງກອງປະຊຸມ ດັ່ງນີ້:

1. ສ້າງ ແລະ ປະຕິບັດແຜນລາຍຈ່າຍງົບປະມານໃຫ້ຈະແຈ້ງ ແລະ ຊັດເຈນ ເປັນຕົ້ນ ການສ້າງແຜນຊຳລະໜີ້ສິນໂຄງການລົງທຶນຂອງລັດ ໃຫ້ລວມສູນ ໂດຍການປະສານສົມທົບລະຫວ່າງກະຊວງການເງິນ, ກະຊວງແຜນການ ແລະ ການລົງທຶນ ແລະ ທະນາຄານແຫ່ງ ສປປ ລາວ ໃນຊ່ວງໄລຍະການປະຕິບັດວາລະແຫ່ງຊາດ, ໄລຍະກາງ ແລະ ໄລຍະຍາວ, ດ້ວຍການກຳນົດແຫຼ່ງທຶນຊຳລະໜີ້ສິນ ໂດຍສະເພາະ ຫຼຸດຜ່ອນການກູ້ຢືມຈາກຕ່າງປະເທດເພື່ອຊຳລະໜີ້ສິນ; ສຳລັບໜີ້ສິນການລົງທຶນຕ່າງປະເທດ ໂດຍມີການເຈລະຈາ ຜ່ອນຜັນໜີ້ສິນສອງຝ່າຍ; ສ້າງແຜນການລົງທຶນຂອງລັດ ໃຫ້ສອດຄ່ອງກັບຄວາມສາມາດຕົວຈິງຂອງງົບປະມານລັດ ແລະ ໄປຕາມກົດໝາຍ; ແກ້ໄຂປາກົດການຫຍໍ້ທໍ້ ໃນລະບຽບການປະມູນ, ຈັດຊື້-ຈັດຈ້າງ ແລະ ການປະຢັດລາຍຈ່າຍບໍລິຫານ;
2. ແກ້ໄຂຂໍ້ຄົງຄ້າງ ແລະ ອັດຊ່ອງຫວ່າງການຮົ່ວໄຫຼຂອງລາຍຮັບຕາມຖານທີ່ມີແລ້ວ, ລາຍຮັບທີ່ເກັບບໍ່ທັນໄດ້ຄົບຖ້ວນ ເຊັ່ນ ລາຍຮັບຈາກການສົ່ງອອກແຮ່ທາດ, ລາຍຮັບຈາກທີ່ດິນ, ຄ່າເຊົ່າສຳປະທານທີ່ດິນລັດ, ລາຍຮັບຈາກທຸລະກິດ ຊື້-ຂາຍ ອອນລາຍ ແລະ ອື່ນໆ; ສຳລັບການຂະຫຍາຍຖານລາຍຮັບໃໝ່ໃຫ້ເອົາໃຈໃສ່ການແບ່ງພູດລາຍຮັບລະຫວ່າງ ຂະແໜງການຂັ້ນສູນກາງ ແລະ ອົງການປົກຄອງຂັ້ນທ້ອງຖິ່ນ ເພື່ອຮັບປະກັນບໍ່ໃຫ້ມີຂໍ້ຂັດແຍ່ງ ໃນການຈັດຕັ້ງປະຕິບັດ;
3. ຍົກສູງປະສິດທິພາບການລົງທຶນຂອງລັດ ດ້ວຍການກວດກາ ແລະ ປະເມີນຄືນໂຄງການລົງທຶນຂອງລັດທີ່ກຳລັງຈັດຕັ້ງປະຕິບັດ, ສຸມທຶນໃສ່ໂຄງການສືບຕໍ່ທີ່ມີຄວາມສຳຄັນເປັນບຸລິມະສິດທີ່ມີປະສິດທິຜົນ ແລະ ມີຜົນຕອບ

ແທນສູງ, ຢຸດຕິໂຄງການທີ່ບໍ່ມີປະສິດທິຜົນ, ອີງໃສ່ຄວາມສາມາດຊໍາລະສະສາງຕົວຈິງ ຂອງງົບປະມານ, ຄຸ້ມຄອງຫົວໜ່ວຍລາຄາກາງ, ມາດຕະຖານເຕັກນິກ, ມູນຄ່າລວມ ແລະ ກໍານົດການຊໍາລະ ຂອງໂຄງການລົງທຶນຂອງລັດ ໃຫ້ໄປຕາມກົດໝາຍ, ສູ້ຊົນສ້າງຄວາມສະດວກໃນຂອດບໍລິການໃຫ້ແກ່ນັກລົງທຶນພາຍໃນ ແລະ ຕ່າງປະເທດ;

4. ປະຕິບັດວຽກຈຸດສຸມການຄຸ້ມຄອງເງິນຕາຕ່າງປະເທດ, ການຄຸ້ມຄອງອັດຕາແລກປ່ຽນ, ການຄຸ້ມຄອງລາຍຮັບເງິນຕາ ແລະ ຊໍາລະສະສາງຜ່ານລະບົບທະນາຄານ ໃຫ້ສໍາເລັດໂດຍໄວ ເພື່ອຮັບປະກັນແຫຼ່ງເງິນຕາຊໍາລະສະສາງກັບສາກົນ ຕາມພັນທະຜູກພັນກັບຄູ່ສັນຍາ;
5. ເລັ່ງລັດປະຕິຮູບວິສາຫະກິດລັດ ທີ່ດໍາເນີນທຸລະກິດບໍ່ມີປະສິດທິຜົນ ແລະ ຂາດທຶນຕໍ່ເນື່ອງ ດ້ວຍການປັບປຸງການບໍລິຫານ ແລະ ບຸກຄະລະກອນ ໃຫ້ມີປະສິດທິພາບ, ແກ້ໄຂໜີ້ສິນ ໃຫ້ຫຼຸດລົງ ແລະ ປັບປຸງຖານະການເງິນໃຫ້ສາມາດແຂ່ງຂັນທາງດ້ານທຸລະກິດ ເພື່ອກ້າວໄປສູ່ ການມີກໍາໄລ ແລະ ເປັນຕົວແບບໃນການປະຕິບັດພັນທະເຂົ້າງົບປະມານແຫ່ງລັດ;
6. ກວດກາ ແລະ ປະເມີນຄືນ ການຈັດຕັ້ງປະຕິບັດບັນດາມາດຕະການ ກ່ຽວກັບການເຊົ່າ, ສໍາປະທານທີ່ດິນ ເພື່ອດໍາເນີນກິດຈະການຕ່າງໆ (ການປູກຝັງ, ການລ້ຽງສັດ, ຂຸດຄົ້ນບໍ່ແຮ່) ຕາມມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 25/ສພຊ, ລົງວັນທີ 19 ພະຈິກ 2019 ເປັນຕົ້ນ ໂຄງການທີ່ບໍ່ມີສັນຍາສໍາປະທານ, ການຜັນຂະຫຍາຍແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ໂດຍສະເພາະ ແຜນການຈັດສັນທີ່ດິນ ຂອງຂະແໜງການ ແລະ ທ້ອງຖິ່ນ;
7. ຄົ້ນຄວ້າອອກນະໂຍບາຍ ແລະ ມາດຕະການຫຼຸດຜ່ອນ ການນໍາເຂົ້າກະແສໄຟຟ້າ ຈາກຕ່າງປະເທດ ເພື່ອຫຼຸດຜ່ອນການຈ່າຍເງິນຕາຕ່າງປະເທດ, ສຸມໃສ່ພັດທະນາໂຄງການໄຟຟ້າ ທີ່ມີຄຸນນະພາບ, ມີຄວາມໝັ້ນຄົງ ເປັນຕົ້ນ ໂຄງການຜະລິດໄຟຟ້າພະລັງນໍ້າທີ່ມີອ່າງເກັບນໍ້າຂະໜາດໃຫຍ່, ໂຄງການໄຟຟ້າພະລັງງານທາງເລືອກ ເຊັ່ນ ພະລັງງານລົມ, ແສງຕາເວັນ ແລະ ອື່ນໆ ຕິດພັນກັບການສ້າງລະບົບສາຍສົ່ງແຫ່ງຊາດ ໃຫ້ຄອບຄຸມໃນຂອບເຂດທົ່ວປະເທດ, ເອົາໃຈໃສ່ພິຈາລະນາລາຄາກະແສໄຟຟ້າ ທີ່ຊົມໃຊ້ພາຍໃນປະເທດຢ່າງສົມເຫດສົມຜົນ ແນໃສ່ຮັບປະກັນການແກ້ໄຂຂໍ້ຫຍຸ້ງຍາກທາງດ້ານການດໍາລົງຊີວິດຂອງປະຊາຊົນ;
8. ການທົດລອງປະຕິບັດນະໂຍບາຍໃໝ່ ກ່ຽວກັບການຂຸດຄົ້ນແຮ່ເຫຼັກ ໂດຍໃຫ້ກໍານົດເນື້ອທີ່ ແລະ ທີ່ຕັ້ງຂອງໂຄງການຢ່າງຈະແຈ້ງ, ຮັບປະກັນໃຫ້ມີຕະຫຼາດຮອງຮັບຢ່າງແນ່ນອນ, ພາຍຫຼັງສໍາເລັດການຈັດຕັ້ງປະຕິບັດໄລຍະທົດລອງ 3 ປີ ໃຫ້ປະເມີນຜົນ ແລະ ສະຫຼຸບລາຍງານຄືນການຈັດຕັ້ງປະຕິບັດ ນະໂຍບາຍດັ່ງກ່າວ, ຖ້າເຫັນວ່າມີປະສິດທິຜົນ ແລະ ມີຄວາມຈໍາເປັນສືບຕໍ່ ຕ້ອງໄດ້ປັບປຸງກົດໝາຍ ແລະ ນິຕິກໍາທີ່ກ່ຽວຂ້ອງ ໃຫ້ສອດຄ່ອງ, ຮັບປະກັນບໍ່ໃຫ້ມີຜົນກະທົບຮ້າຍແຮງຕໍ່ສິ່ງແວດລ້ອມ ທໍາມະຊາດ ແລະ ສັງຄົມ ພ້ອມທັງ ມີມາດຕະການແກ້ໄຂແຕ່ຫົວທີ ໂດຍສະເພາະ ການຊົດເຊີຍ ແລະ ທົດແທນຄ່າເສຍຫາຍ, ການຍົກຍ້າຍຈັດສັນປະຊາຊົນ ແລະ ການພັດທະນາອາຊີບໃຫ້ແກ່ປະຊາຊົນທີ່ໄດ້ຮັບຜົນກະທົບຈາກໂຄງການ;
9. ຍູ້ແຮງການຜະລິດພາຍໃນ ເພື່ອທົດແທນການນໍາເຂົ້າ ແລະ ເປັນສິນຄ້າສົ່ງອອກ ໃຫ້ຫຼາຍຂຶ້ນ ຕາມແລວທາງເສດຖະກິດ ເພື່ອເຊື່ອມຈອດພາຍໃນ ແລະ ພາກພື້ນ, ໂດຍສະເພາະ ເລັ່ງໃສ່ຊຸກຍູ້ ການຜະລິດກະສິກໍາ ທີ່ມີທ່າແຮງ ແລະ ຕະຫຼາດຮອງຮັບ, ຟື້ນຟູ ແລະ ປັບປຸງ ໂຄງລ່າງພື້ນຖານການຜະລິດກະສິກໍາ ໃຫ້ມີປະສິດທິພາບສູງ; ຍົກລະດັບ ສູນຄົ້ນຄວ້າ ແລະ ການສະໜອງທຶນໃຫ້ແກ່ສູນບໍລິການເຕັກນິກກະສິກໍາ ແນໃສ່ສະໜອງແນວພັນພືດ-ແນວພັນສັດ ແລະ ເຕັກນິກວິຊາການ ໃຫ້ແກ່ຜູ້ທໍາການຜະລິດ ເພື່ອຫຼຸດຜ່ອນຕົ້ນທຶນການຜະລິດ, ເພີ່ມຜົນຜະລິດທີ່ມີຄຸນນະພາບ ແລະ ລາຄາ ທີ່ສາມາດແກ້ງແຍ້ງແຂ່ງຂັນກັບປະເທດອ້ອມຂ້າງ ແລະ ສາກົນ;
10. ກໍານົດນະໂຍບາຍສົ່ງເສີມ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃຫ້ຈະແຈ້ງ ແລະ ເປັນຮູບປະທໍາຫຼາຍຂຶ້ນ ເປັນຕົ້ນ ການເຂົ້າເຖິງແຫຼ່ງທຶນດອກເບ້ຍຕໍ່າ, ການຊອກຕະຫຼາດຈໍາໜ່າຍ, ການສ້າງຕ່ອງໂສ້ການຜະລິດ ພ້ອມທັງ ການບໍລິການໃຫ້ຄໍາປຶກສາ ດ້ານກົດໝາຍ ແລະ ວິຊາການ, ສ້າງຄວາມເຂັ້ມແຂງ ໃຫ້ຜູ້ປະກອບການໃໝ່ ເພື່ອເປັນຖານລາຍຮັບທີ່ໝັ້ນຄົງ ຕາມທິດຫັນປ່ຽນຈາກສັງຄົມບໍລິໂພກ ໄປສູ່ສັງຄົມການຜະລິດ;

11. ແກ້ໄຂບັນຫາການວ່າງງານ ໂດຍສະເພາະ ການສ້າງວຽກເຮັດງານທຳໃຫ້ແກ່ນັກສຶກສາ ທີ່ຮຽນຈົບການສຶກສາ ຂະແໜງການຕ່າງໆ, ແຮງງານພາຍໃນ, ແຮງງານທີ່ກັບຄືນຈາກຕ່າງປະເທດ ແລະ ຮັກສາກຳລັງແຮງງານໃນວິສາຫະກິດລັດ ໄລຍະການແຜ່ລະບາດພະຍາດ ໂຄວິດ-19 ໂດຍສົ່ງເສີມໃຫ້ມີການສືບຕໍ່ພັດທະນາວິຊາຊີບ, ສີມືແຮງງານ ຕາມຄວາມຮຽກຮ້ອງຕ້ອງການຕະຫຼາດແຮງງານໃນເງື່ອນໄຂວິຖີການດຳລົງຊີວິດແບບໃໝ່;
12. ເອົາໃຈໃສ່ ສ້າງ ແລະ ປັບປຸງແຜນວຽກ, ແຜນຄົນ ແລະ ແຜນງົບປະມານ ທີ່ຕິດພັນກັບວາລະແຫ່ງຊາດ ໃຫ້ມີຄວາມສອດຄ່ອງ ແລະ ເປັນລະບົບ, ແບ່ງຂັ້ນຄຸ້ມຄອງ ແລະ ແບ່ງຄວາມຮັບຜິດຊອບ ລະຫວ່າງ ຂະແໜງການຂັ້ນສູນກາງ ແລະ ອົງການປົກຄອງຂັ້ນທ້ອງຖິ່ນໃຫ້ຈະແຈ້ງ ຕາມທິດສາມສ້າງ, ພ້ອມທັງ ຊີ້ນຳຂະແໜງການທີ່ກ່ຽວຂ້ອງ ຄົ້ນຄວ້າກຳນົດຄາດໝາຍສູ້ຊົນ, ຕົວຊີ້ວັດ ແລະ ມາດຕະການດ້ານຕ່າງໆ ໃຫ້ຖືກຕ້ອງ, ຊັດເຈນ, ມີຈຸດສຸມ ແລະ ຮີບດ່ວນກວ່າໝູ່ ຊຶ່ງແຕກຕ່າງກັບແຜນວຽກປົກກະຕິ ສາມາດຈັດຕັ້ງປະຕິບັດໃນໄລຍະເວລາທີ່ວາງໄວ້ ແນໃສ່ເປັນບ່ອນອີງໃນການຈັດຕັ້ງປະຕິບັດ ແລະ ສະດວກໃນການຕິດຕາມ-ກວດກາຕົວຈິງ;
13. ຮີບຮ້ອນ ຄົ້ນຄວ້າ ສ້າງ ແລະ ປັບປຸງ ບັນດາກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ທີ່ຕິດພັນກັບວາລະແຫ່ງຊາດ ໃຫ້ມີຄວາມສອດຄ່ອງ ແລະ ສຳເລັດໂດຍໄວ ໂດຍສະເພາະ ກົດໝາຍວ່າດ້ວຍງົບປະມານ, ກົດໝາຍວ່າດ້ວຍການຄຸ້ມຄອງໜີ້ສິນສາທາລະນະ, ກົດໝາຍວ່າດ້ວຍຊັບສິນຂອງລັດ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍແຮ່ທາດ, ກົດໝາຍວ່າດ້ວຍອາກອນທີ່ດິນ ແລະ ຊັບສິນ, ກົດໝາຍວ່າດ້ວຍອາກອນສິ່ງແວດລ້ອມ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ ໃນສຳເລັດກ່ອນຕົ້ນປີ 2022;
14. ເພີ່ມທະວີການຊຸກຍູ້ຕິດຕາມກວດກາປົກກະຕິ ແລະ ປະເມີນຜົນໃນແຕ່ລະປີ ສະພາບການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ໄລຍະຈັດຕັ້ງປະຕິບັດວາລະແຫ່ງຊາດ ເປັນຕົ້ນ ກວດກາຄວາມຮັບຜິດຊອບການເມືອງຂອງການນຳແຕ່ລະຂັ້ນ ນັບແຕ່ຂັ້ນສູນກາງ ລົງມາຮອດ ຂັ້ນແຂວງ, ເມືອງ ແລະ ບ້ານ ໃຫ້ຮັບປະກັນການຊີ້ນຳ ບັນຊາ ຢ່າງເປັນເອກະພາບໃນທົ່ວພາກລັດ ແລະ ສັງຄົມ.

**ມາດຕາ 5 ການຈັດຕັ້ງປະຕິບັດ**

1. ມອບໃຫ້ ລັດຖະບານ, ອົງການປົກຄອງທ້ອງຖິ່ນ ເພີ່ມທະວີການຊີ້ນຳ, ຍົກສູງຄວາມຮັບຜິດຊອບຂອງຕົນ ເພື່ອຈັດຕັ້ງຜັນຂະຫຍາຍ ເປັນມາດຕະການລະອຽດໃນແຕ່ລະບັນຫາ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ເພື່ອນຳໄປຈັດຕັ້ງປະຕິບັດ ຢູ່ຂະແໜງການ ແລະ ທ້ອງຖິ່ນ ຕາມກອບເວລາທີ່ກຳນົດໄວ້ ພ້ອມທັງເອົາໃຈໃສ່ຕິດຕາມ, ກວດກາ, ປະເມີນຜົນ ແລະ ຖອດຖອນບົດຮຽນ ຢ່າງເປັນປົກກະຕິ;
2. ມອບໃຫ້ ອົງການກວດກາແຫ່ງລັດ ແລະ ອົງການກວດສອບແຫ່ງລັດ ຕິດຕາມກວດກາການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ;
3. ມອບໃຫ້ ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ ແລະ ທຸກພາກສ່ວນໃນສັງຄົມ ລວມທັງປະຊາຊົນລາວບັນດາເຜົ່າ ໃຫ້ການຊຸກຍູ້, ສະໜັບສະໜູນຮ່ວມມື, ຕິດຕາມກວດກາ ແລະ ເປັນເຈົ້າການ ໃນການປະຕິບັດພັນທະ, ຕາມສິດ ແລະ ໜ້າທີ່ຂອງຕົນ;
4. ມອບໃຫ້ ຄະນະປະຈຳສະພາແຫ່ງຊາດ, ບັນດາກຳມາທິການ, ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ, ສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ດຳເນີນການຕິດຕາມກວດກາ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ.

**ມາດຕາ 6 ຜົນສັກສິດ**

ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາແຫ່ງຊາດ**

ປອ ໄຊສົມພອນ ພົມວິຫານ